ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງການເງິນ

ຫ້ອງການ

2667

ເລກທີ /ຫກງ

ນະຄອນຫລວງວຽງຈັນ, ວັນທີ 17 OCT 2017

# ແຈ້ງການ

**ເຖິງ:** ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ເປັນເຈົ້າຂອງ ຫລື ນຳໃຊ້ຍານພາຫະນະທຸກປະເພດ ໃນຂອບເຂດທົ່ວປະເທດ.

**ເລື່ອງ:** ການເສຍຄ່າທຳນຽມທາງ (ໃບຄ່າທາງ) ປະຈຳປີ 2017.

- ອີງຕາມ ລັດຖະບັນຍັດຂອງປະທານປະເທດສະບັບເລກທີ 001/ປປທ, ລົງວັນທີ 20 ກັນຍາ 2017 ວ່າດ້ວຍຄ່າທຳນຽມທາງ;
- ອີງຕາມ ຂໍ້ຕົກລົງຂອງທ່ານຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ ສະບັບເລກທີ 2929/ກງ, ລົງວັນທີ 31 ສິງຫາ 2017 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການກະຊວງການເງິນ;
- ອີງຕາມ ຄຳແນະນຳຈັດຕັ້ງປະຕິບັດລັດຖະບັນຍັດວ່າດ້ວຍຄ່າທຳນຽມທາງ ສະບັບເລກທີ 3455/ກງ, ລົງວັນທີ 10 ຕຸລາ 2017.

ເພື່ອເຮັດໃຫ້ການເກັບຄ່າທຳນຽມທາງປະຈຳປີ 2017 ໄດ້ຖືກຈັດຕັ້ງປະຕິບັດຖືກຕ້ອງ, ທັນຕາມກຳນົດເວລາ ແລະ ມີຄວາມເປັນເອກະພາບໃນຂອບເຂດທົ່ວປະເທດ, ຫ້ອງການກະຊວງການເງິນຂໍຖືເປັນກຽດແຈ້ງມາຍັງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງໃນຂອບເຂດທົ່ວປະເທດຊາບວ່າ: ການເສຍຄ່າທານຽມທາງ (ໃບຄ່າທາງ) ປະຈຳປີ 2017 ໃຫ້ປະຕິບັດດັ່ງນີ້:

1. ເນື່ອງຈາກມີການປັບປຸງນິຕິກຳ ແລະ ກົນໄກການຄຸ້ມຄອງການເກັບຄ່າທຳນຽມທາງໃນປີດ້ວຍລະບົບທີ່ທັນສະໄໝຫລ້າຊ້າ ແລະ ອີງຕາມຜົນໃນການຈັດຕັ້ງປະຕິບັດ. ສະນັ້ນ, ການເສຍຄ່າທານຽມທາງປະຈຳປີ 2017 ແມ່ນໃຫ້ເລີ່ມເສຍຄ່າທຳນຽມທາງນັບແຕ່ວັນທີ **30 ຕຸລາ 2017** ເປັນຕົ້ນໄປ;
2. ໄລຍະເວລາປົກກະຕິຂອງການເສຍຄ່າທຳນຽມທາງປະຈຳປີ 2017 ຍ້ອນມີການຫລ້າຊ້າຕາມເຫດຜົນທີ່ໄດ້ກ່າວຢູ່ຂໍ້ 1 ຂ້າງເທິງ. ດັ່ງນັ້ນ, ການເສຍຄ່າທຳນຽມທາງຈຶ່ງສາມາດແກ່ຍາວຮອດ ວັນທີ **31 ມີນາ 2018** ແຕ່ຖ້າກາຍກຳນົດເວລາດັ່ງກ່າວຈະຖືກປັບໃໝຕາມແຕ່ລະກໍລະນີທີ່ໄດ້ກຳນົດໄວ້ໃນ IV ຂໍ້ 2 ຂອງຄຳແນະນຳຈັດຕັ້ງປະຕິບັດລັດຖະບັນຍັດວ່າດ້ວຍຄ່າທຳນຽມທາງສະບັບເລກທີ 3455/ກງ, ລົງວັນທີ 10 ຕຸລາ 2017;
3. ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ນຳໃຊ້ຍານພາຫະນະໃໝ່ ເຖິງແມ່ນວ່າຈະນຳໃຊ້ ຫລື ຂຶ້ນທະບຽນຍານພາຫະນະໃນວັນທີ ຫລື ເດືອນໃດກໍ່ຕາມພາຍໃນປີ ກໍຕ້ອງໄດ້ເສຍຄ່າທຳນຽມທາງປະຈຳປີນັ້ນ;

4. ອັດຕາຄ່າທຳນຽມທາງແມ່ນໃຫ້ປະຕິບັດຕາມລັດຖະບັນຍັດຂອງປະທານປະເທດສະບັບເລກທີ 001/ປປທ, ລົງວັນທີ 20 ກັນຍາ 2017 ວ່າດ້ວຍຄ່າທຳນຽມທາງ;
5. ການຊຳລະເງິນຄ່າທຳນຽມທາງແມ່ນໃຫ້ຊຳລະຜ່ານລະບົບທະນາຄານ (ທະນາຄານການຄ້າຕ່າງປະເທດລາວມະຫາຊົນ) ດ້ວຍທ່າທາງເລືອກຄື: ຊຳລະຜ່ານລະບົບເຄົາເຕີຂອງທະນາຄານ (**Counter**), ຊຳລະຜ່ານແອັບພຣິເຄເຊິນມືຖື (Mobile Application), ຊຳລະຜ່ານຕູ້ເອທີເອັມ (ATM), ຊຳລະຜ່ານຕູ້ອັດຕະໂນມັດ (**Kiosk**) ແລະ ຊຳລະຜ່ານສະຖານທີ່ຈຸດໃຫ້ບໍລິການທີ່ໄດ້ຮັບອະນຸຍາດ (**BCOME**). ຖ້າບໍ່ເຂົ້າໃຈລະອຽດແມ່ນໃຫ້ຕິດຕໍ່ສອບຖາມມາຍັງ:
   - ກົມສ່ວຍສາອາກອນ : 021 217025
   - ບໍລິການສອບຖາມຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ: 1555
6. ມອບໃຫ້ກົມສ່ວຍສາອາກອນ, ສ່ວຍສາອາກອນປະຈຳແຂວງ, ນະຄອນຫລວງ, ສ່ວຍສາອາກອນປະຈຳເມືອງ, ເທດສະບານ ປະສານສົມທົບກັບທຸກພາກສ່ວນທີ່ກ່ຽວຂ້ອງ ເພື່ອຊຸກຍູ້ເຜີຍແຜ່ການຈັດຕັ້ງປະຕິບັດການເສຍຄ່າທຳນຽມທາງປະຈຳປີ 2017 ໃຫ້ມີປະສິດທິຜົນ, ໂປ່ງໃສ ແລະ ຮັບປະກັນການເກັບລາຍຮັບຈາກຄ່າທຳນຽມທາງເຂົ້າງົບປະມານແຫ່ງລັດໃຫ້ຄົບຖ້ວນ.

ດັ່ງນັ້ນ, ຈຶ່ງແຈ້ງມາເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ໃຫ້ໄດ້ຮັບຜົນດີ.

ເຊັນແທນ ຫົວໜ້າຫ້ອງການກະຊວງ

ສຸລິຍາ ສຸພິທັກ

**ສຳເນົານຳສົ່ງ:**

- ກົມສ່ວຍສາອາກອນ 1 ສະບັບ
  (ເພື່ອຕິດຕາມການຈັດຕັ້ງປະຕິບັດ);
- ສ່ວຍສາອາກອນປະຈຳແຂວງ, ນະຄອນຫລວງ ໃນຂອບເຂດ
  ທົ່ວປະເທດ 1 ສະບັບ (ເພື່ອປະຕິບັດ)